*ສະບາຍດີອາຈານແລະເພື່ອນຄຣູທີ່ຮັກແພງ*

*ຈາກງານພົບປະສ້າງສັນພົບກັນຄັ້ງແຣກ ໃນຄົບຮອບສາມສິບປີ ຂອງວິທຍາລັຍຄຣູສວັນນະເຂດກໍຜ່ານໄປສອງເດືອນກວ່າແລ້ວ ແຕ່ພາບຄວາມສຸກໃນວັນນັ້ນກໍຍັງຢູ່ໃນຢູ່ໃນຄວາມຊົງຈຳຂອງທຸກໆ ຄົນ. ຄວາມສັມພັນຂອງພວກເຮົານີ້ຈະບໍ່ມີວັນທີ່ຈະຊິ້ນສຸດ, ນັ້ນເປັນ ພຽງການເລີ້ມຕົ້ນໃນການພົບກັນຂອງພວກເຮົາເທົ່ານັ້ນຊຶ່ງອ້າຍອິນທະ ຫວາ ທອມອ່ອນ ເປັນຜູ້ອອກແບບໃນການແຕ້ມໃສ່ເສື້ອ* **T SHIRT** *ຂອງພວກເຮົາວ່າ* **FIRST REUION** *ສະນັ້ນ ຖ້າມີຄຳວ່າຄັ້ງທີນຶ່ງ ແລ້ວແນ່ນອນຈະຕ້ອງມີຄຳວ່າ ສອງ ສາມ.........*

*ສີພັນດອນ ຫຼືວ່າ ບົວວັນ ສີດາວົງ ພາກພູມໃຈເປັນຢ່າງຍິ່ງທີ່ຮູ້ວ່າງານ ພົບປະຄັ້ງທີສອງຂອງພວກເຮົາກໍໄດ້ຕຽມພ້ອມໃນການກະກຽມແລ້ວຈາກ ການສເນີຂອງ ຜູ້ມີນ້ຳໃຈກວ້າງເຫມືອນສາຍຂອງ ຄົນມີສອງ ຕໍ່ຈາກ ເອື້ອຍຂັນເງິນ ນັ້ນຄື ຜູ້ອຳນວຍການ ຫຼື ອ້າຍໃຫຍ່ຂອງພວກເຮົາ ທ່ານເງິນແທ່ງ ພ້ອມພັລຍາ ເອື້ອຍຍົມມາລາ ເກຕວົງ. ນີ້ຄືຂ່າວດີອັນ ນຶ່ງທີ່ພວກເຮົາທຸກໆຄົນຄວນຈະພາກພູມໃຈແລະຊ່ວຍກັນດ້ວຍແຮງໃຈ ສືບຕໍ່ໃນການສືບຂ່າວທາວຫາອະດີດນັກຮຽນນັກສຶກສາທີ່ຍັງບໍ່ທັນມີຊື່ ໃນບັນຊີຂອງ ວິທຍາລັຍຄຣູສວັນນະເຂດ. ພວກເຮົາມີເວລາກະກຽມຢູ່ ເຖິງສອງປີ ຫວັງວ່າທຸກໆຄົນຄົງມີເວລາພຽງພໍທີ່ຈະໃຫ້ງານຄັ້ງທີສອງນີ້ ອອກມາໄດ້ດີທີ່ສຸດ. ທີ່ສົ່ງຂ່າວໃຫ້ອາຈານແລະເພື່ອນຄຣູຮູ້ຄັ້ງນີ້ ເປັນ*

*ຄວາມຮູ້ສຶກສ່ວນຕົວ  ຄວາມພາກພູມໃຈທີ່ຈະໄດ້ພົບກັນອີກແລະກໍ ຈະໄດ້ພົບຜູ້ທີ່ບໍ່ມີໂອກາດມາໃນຄັ້ງທີນຶ່ງ.ເພາະດອນເອງມີໂອກາດລືມ ກັບທາງເຈົ້າພາບ  ເອື້ອຍຍິນມາລາແລະເພື່ອນອີກຄົນນຶ່ງຄື ສົມສັກ  ສີຫາວົງ  ກ່ຽວກັບການເລີ້ມຕົ້ນໃນການກະກຽມ.*

*ພ້ອມນີ້ຂໍສະແດງຄວາມຂອບໃຈເປັນພິເສດນຳທ່ານຫຼື  ອ້າຍໜູ  ນິຣາວັນ ທີ່ສ້າງ* **website** *ໃຫ້ແກ່* **sao luck 7** *ຈາກການຮັບຮູ້ຂອງບັນດາອາຈານ ແລະໝູ່ທຸກໆຄົນໃນການເລີ້ມຕົ້ນຂອງການເປັນນັກກະວີ  ສີພັນດອນ ( ບົວວັນ  ສີດາວົງ  ) ຈະພະຍາຍາມທຳໃຫ້ໄດ້ດີທີ່ສຸດໃນການແຕ່ງກາບກອນ ໃຫ້ທຸກໆຄົນໄດ້ອ່ານຫຼິ້ນໃນໂອກາດຫວ່າງໆ.ຂໍຂອບໃຈນຳເພື່ອນຄູທີ່ອ່ານຄຳກອນແລະຢ້ຽມຢາມ* **website** *ຂອງດອນ.*

*ຮັກແພງແລະນັບຖື*

*ສາວຫຼັກ ໗ ( ສີພັນດອນ  ບົວວັນ  ສີດາວົງ)*
**http://saoluck7.tripod.com**